ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ເລກທີ 529 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 21 JUL 2015

ສຳນັກງານ ຄຄຊ
ລາຍເຊັນ ເລກທີ 745
ວັນທີ 23 JUL 2015
ໂທລະສັບ 021 217770

## ຂໍ້ຕົກລົງ

## ກ່ຽວກັບການກຳນົດອັດຕາດອກເບ້ຍຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມການຕົກລົງຂອງກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 16 ກໍລະກົດ 2015;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

ມາດຕາ 1: ໃຫ້ທະນາຄານທຸລະກິດກຳນົດອັດຕາດອກເບ້ຍເງິນຝາກສະກຸນເງິນກີບ 12 ເດືອນ ດ້ວຍການນຳໃຊ້ອັດຕາເງິນເຟີ້ສະເລ່ຍຂອງປີຜ່ານມາ ບວກ 2%.

ມາດຕາ 2: ໃຫ້ທະນາຄານທຸລະກິດ ກຳນົດສ່ວນຕ່າງລະຫວ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ ສະເລ່ຍຖ່ວງນ້ຳໜັກຜົດດ່ຽງບໍ່ເກີນ 4%.

ມາດຕາ 3: ໃຫ້ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ແຈ້ງອັດຕາເງິນເຟີ້ສະເລ່ຍຂອງປີຜ່ານມາ, ອັດຕາດອກເບ້ຍເງິນຝາກປະຫຍັດ, ເງິນຝາກມີກຳນົດ 3 ເດືອນ, 6 ເດືອນ, 12 ເດືອນ ແລະ 24 ເດືອນ ສະກຸນເງິນກີບ ແລະ ອອກບົດແນະນຳການຄິດໄລ່ສ່ວນຕ່າງລະຫວ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ໃຫ້ທະນາຄານທຸລະກິດ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ມາດຕາ 4: ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ສະກຸນເງິນກີບ ທີ່ໄດ້ປະຕິບັດກ່ອນວັນທີ 3 ສິງຫາ 2015 ໃຫ້ປະຕິບັດຕາມເງື່ອນໄຂເກົ່າຈົນກວ່າຈະຄົບກຳນົດ.

ມາດຕາ 5: ໃຫ້ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ບັນດາສາຂາພາກທະນາຄານແຫ່ງ ສປປ ລາວ ແລະ ບັນດາທະນາຄານທຸລະກິດ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງຕົນຢ່າງເຂັ້ມງວດ.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

ມາດຕາ 6: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 3 ສິງຫາ 2015 ເປັນຕົ້ນໄປ ທຸກຂໍ້ກຳນົດ, ລະບຽບ ແລະ ຄຳສັ່ງຂອງທະນາຄານແຫ່ງ ສປປ ລາວ ທີ່ໃຊ້ໃນເມື່ອກ່ອນ ຖ້າຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**




ດຣ. ສົມພາວ ໄພສິດ